ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຄັງເງິນແຫ່ງລັດ

ເລກທີ 1343 /ຄງລ

ນະຄອນຫຼວງວຽງຈັນ, ວັນທີ 18 ພຶດສະພາ 2026

# ແຈ້ງເຊີນ

## ເຂົ້າຮ່ວມຊື້ຊອງປະມູນທາບທາມລາຄາ ປັບປຸງ, ສ້ອມແປງຫ້ອງເຮັດວຽກ ຂອງຄັງເງິນແຫ່ງລັດ ແລະ ກົມງົບປະມານແຫ່ງລັດ ພາຍໃນຕຶກ A ປະຈໍາປີ 2026

**ເຖິງ :** ບັນດາ ບໍລິສັດ, ຫ້າງຮ້ານທົ່ວໄປ ທີ່ມີຄວາມສົນໃຈເຂົ້າຮ່ວມຊື້ຊອງປະມູນລາຄາ ປັບປຸງ, ສ້ອມແປງ ຫ້ອງເຮັດວຽກ ຂອງຄັງເງິນແຫ່ງລັດ ແລະ ກົມງົບປະມານແຫ່ງລັດ ພາຍໃນຕຶກ A ປະຈໍາປີ 2026;

**ເລື່ອງ:** ເຊີນເຂົ້າຮ່ວມຊື້ຊອງປະມູນທາບທາມລາຄາ ແຜນການປັບປຸງ, ສ້ອມແປງຫ້ອງເຮັດວຽກ ຂອງຄັງເງິນແຫ່ງລັດ ແລະ ກົມງົບປະມານແຫ່ງລັດ ພາຍໃນຕຶກ A ປະຈໍາປີ 2026

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 030/ກງ, ລົງວັນທີ 2 ທັນວາ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄັງເງິນແຫ່ງລັດ ສະບັບເລກທີ 2888/ກງ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ສະພາບສໍານັກງານທີ່ມີການເປ່ເພ ແລະ ການຄົ້ນຄ້ວາເຫັນດີເປັນເອກະພາບຂອງຄະນະນໍາຄັງເງິນແຫ່ງລັດ ຄັ້ງວັນທີ 18 ພຶດສະພາ 2026.

ຄັງເງິນແຫ່ງລັດ ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ: ປະຈຸບັນຄັງເງິນແຫ່ງລັດ ໄດ້ມີແຜນການປັບປຸງ, ສ້ອມແປງຫ້ອງເຮັດວຽກ ຂອງຄັງເງິນແຫ່ງລັດ ແລະ ກົມງົບປະມານແຫ່ງລັດ ພາຍໃນຕຶກ A ປະຈໍາປີ 2026 ໂດຍນໍາໃຊ້ງົບປະມານບ້ວງລາຍຮັບຄ່າບໍລິການທາງດ້ານວິຊາການ ຂອງຄັງເງິນແຫ່ງລັດ.

ດັ່ງນັ້ນ, ຈຶ່ງແຈ້ງຈຸດປະສົງ ແລະ ຂໍຄວາມຮ່ວມມືຈາກຜູ້ດໍາເນີນທຸລະກິດ ກ່ຽວກັບວຽກງານດັ່ງກ່າວ ທີ່ມີຄວາມສົນໃຈເຂົ້າຮ່ວມການແຂ່ງຂັນລາຄາຄັ້ງນີ້ ສະເໜີທ່ານ ເຂົ້າມາພົວພັນລາຍລະອຽດ ແລະ ສົ່ງໃບແຈ້ງລາຄາເຂົ້າຮ່ວມ ຕາມລາຍການທີ່ຕ້ອງການສົມທຽບລາຄາ ທີ່ຄັດຕິດມາພ້ອມນີ້ ແລະ ໃຫ້ປະຕິບັດຕາມບົດແນະນໍາ ແລະ ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮ່ວມການສະເໜີລາຄາ ລາຍລະອຽດ ດັ່ງນີ້:

1. ໃບທະບຽນວິສາຫະກິດ ທີ່ຂະແໜງການກ່ຽວຂ້ອງອອກອະນຸຍາດນໍາໃຊ້ໄດ້ ໃນປະຈຸບັນ;
2. ໃບອະນຸຍາດດໍາເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງອອກອະນຸຍາດນໍາໃຊ້ໄດ້ ໃນປະຈຸບັນ;
3. ໃບຢັ້ງຢືນການມອບພັນທະອາກອນ ທີ່ຂະແໜງສ່ວຍສາອາກອນບ່ອນຕົນຂຶ້ນກັບ ອອກອະນຸຍາດນໍາໃຊ້ໄດ້ປະຈຸບັນ;
4. ເອກະສານຢັ້ງຢືນການປະຕິບັດພັນທະຕ່າງໆ ຢ່າງເປັນປົກກະຕິ ຫຼື ຮອດເດືອນລ່າສຸດ;
5. ໃບຢັ້ງຢືນຖານະການເງິນ ຈາກທະນາຄານ ກໍານົດໄລຍະ 03 ເດືອນ ແລະ ໃບແຈ້ງໂທດ;
6. ຕ້ອງປະກອບເອກະສານປະມູນ ຕາມແບບຟອມໃບປະເມີນທາບທາມລາຄາ ປັບປຸງ, ສ້ອມແປງຫ້ອງເຮັດວຽກ ຂອງຄັງເງິນແຫ່ງລັດ ແລະ ກົມງົບປະມານແຫ່ງລັດ ພາຍໃນຕຶກ A ປະຈໍາປີ 2026 ໂດຍນໍາໃຊ້ງົບປະມານບ້ວງລາຍຮັບຄ່າບໍລິການທາງດ້ານວິຊາການ ຂອງຄັງເງິນແຫ່ງລັດ.

7. ໃຫ້ສອດຄ່ອງກັບ ລະບຽບການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ (ມູນຄ່າສະເໜີຕ້ອງລວມມີອາກອນພ້ອມ);
8. ໃບສະເໜີລາຄາ ຕ້ອງບໍ່ໃຫ້ມີບ່ອນເປິເປື້ອນ, ບໍ່ມີຮອຍຂີດຂ້າ, ຮອຍລຶບ ຫຼື ແປງຕົວເລກແຕ່ຢ່າງໃດ, ເຊັນຢັ້ງຢືນ ແລະ ຈ້ຳກາບໍລິສັດ ຫຼື ຫ້າງຮ້ານທີ່ກ່ຽວຂ້ອງ;
9. ແຜນດຳເນີນງານຂອງໂຄງການສ້ອມແປງໂຄງການດັ່ງກ່າວ;
10. ບໍລິສັດ ທີ່ຈະເຂົ້າຮ່ວມການທາບທາມລາຄາໂຄງການດັ່ງກ່າວຕ້ອງ ສຶກສາແບບສ້ອມແປງ, ບໍລິມາດແຕ່ລະໜ້າວຽກ, ມາດຖານດ້ານເຕັກນິກ, ລົງກວດກາສະຖານທີ່ສ້ອມແປງຝາຂັ້ນຫ້ອງໃຫ້ລະອຽດກ່ອນທີ່ຈະສະເໜີລາຄາທາບທາມ;
11. ການປະກອບເອກະສານ ໃຫ້ປະກອບ 2 ຊຸດ ຄື: ເອກະສານສະບັບຕົ້ນ 01 ສະບັບ ແລະ ສະບັບສຳເນົາ 01 ສະບັບ;
12. ເງື່ອນໄຂ ແລະ ຊອງລາຄາທາບທາມ, ເອກະສານທຸກໆໃບ ຕ້ອງຈ້ຳກາບໍລິສັດໃສ່ລາຄາລວມອາກອນ;
13. ຄະນະກຳມະການຈະເປີດຊອງ ທາບທາມລາຄາແຜນການປັບປຸງ, ສ້ອມແປງຫ້ອງເຮັດວຽກ ຂອງຄັງເງິນແຫ່ງລັດ ແລະ ກົມງົບປະມານແຫ່ງລັດ ພາຍໃນຕຶກ A ປະຈຳປີ 2026 ຢູ່ຄັງເງິນແຫ່ງລັດ ໂດຍນຳໃຊ້ງົບປະມານປ້ວງລາຍຮັບຄ່າບໍລິການທາງດ້ານວິຊາການ ຂອງຄັງເງິນແຫ່ງລັດ.
14. ຄັງເງິນແຫ່ງລັດ ແລະ ຄົ້ນຄ້ວາຄັດເລືອກເອົາບໍລິສັດທີ່ປະກອບເອກະສານຖືກຕ້ອງ, ຄົບຖ້ວນ, ສະເໜີລາຄາ ແລະ ສົມເຫດສົມຜົນເປັນຜູ້ຊະນະ;
15. ຕ້ອງພົວພັນຮັບເອກະສານລະບຽບການປະມູນ ກັບພະແນກຈັດຕັ້ງ, ບໍລິຫານ ແລະ ການເງິນ ພາຍຫຼັງຄັງເງິນແຫ່ງລັດໄດ້ອອກແຈ້ງການເຊີນເຂົ້າຮ່ວມການປະມູນ;
16. ພາຍຫຼັງປະກອບເອກະສານຕາມເງື່ອນໄຂທີ່ລະບຸໄວ້ຂໍ້ 1 ຫາ 14 ຮຽບຮ້ອຍແລ້ວ, ໃຫ້ເອົາເອກະສານທັງໝົດ ໃສ່ໃນຊອງປະມູນ ພ້ອມທັງ ຕິດກາວ ແລະ ຈ້ຳຕາປະທັບຂອງຮ້ານໃສ່ດ້ານນອກຊອງ, ຫຼັງຈາກນັ້ນ ໃຫ້ຜູ້ອຳນວຍການ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດນຳຊອງເອກະສານດັ່ງກ່າວເຂົ້າມາຮ່ວມເປີດຊອງປະມູນສົມທຽບລາຄາ ຕາມວັນ, ເວລາ ທີ່ຄະນະຮັບຜິດຊອບການຈັດຊື້-ຈັດຈ້າງ ຂອງຄັງເງິນແຫ່ງລັດ (ວັນເວລາ ຈະແຈ້ງຕື່ມພາຍຫຼັງ);
17. ບໍລິສັດ ຫຼື ຫ້າງຮ້ານທີ່ຊະນະການປະມູນ ຕ້ອງສະໜອງການບໍລິການໃຫ້ແກ່ຄັງເງິນແຫ່ງລັດ ຕາມເງື່ອນໄຂທີ່ລະບຸໄວ້ໃນສັນຍາການສ້ອມແປງ.

ໝາຍເຫດ:

- ຖ້າບໍລິສັດ ຫຼື ຫ້າງຮ້ານໃດ ຫາກປະກອບເອກະສານບໍ່ຖືກຕ້ອງຄົບຖ້ວນຕາມຂໍ້ແນະນຳແກ່ຜູ້ທີ່ຈະຮ່ວມສະເໜີແຈ້ງລາຄາຂ້າງເທິງນີ້ແລ້ວ ຈະບໍ່ຖືກພິຈາລະນາ ແລະ ຈະບໍ່ອ່ານລາຄາຕໍ່ໜ້າຄະນະກຳມະການສົມທຽບລາຄາແຕ່ຢ່າງໃດ, ຖືວ່າໝົດສິດໃນການປະມູນ;
- ແຜນຄວາມຕ້ອງການທີ່ຈະຈັດຊື້-ຈັດຈ້າງ ໃນຄັ້ງນີ້ໄດ້ຄັດຕິດມາພ້ອມນີ້.

ຫວັງວ່າ, ທ່ານຄົງໃຫ້ຄວາມຮ່ວມມື ແລະ ສະເໜີລາຄາໃນການປະມູນຄັ້ງນີ້ດ້ວຍ.

ຫົວໜ້າຄັງເງິນແຫ່ງລັດ

ຄັງເງິນແຫ່ງລັດ

ນ.ບົວເລີງຄຶນ ດວງສະຫວັນ